







# ວັດທະນະທຳເຄື່ອງປັ້ນດິນເຜົາທີ່ສືບທອດມາເປັນເວລາພັນປີ ໄດ້ເຜີຍແຜ່ໄປທົ່ວໂລກ

ເຄື່ອງປັ້ນດິນເຜົາຈີນເຄີຍເຜີຍແຜ່ໄປເຖິງບັນດາປະເທດອາຊີ, ອາຟຣິກາ, ເອີຣົບ ແລະ ອາເມຣິກາ. ເມື່ອໄປເຖິງບ່ອນໃດ, ພໍ່ຄ້າທີ່ຂາຍເຄື່ອງປັ້ນດິນເຜົາ ກໍໄດ້ນຳເອົາອາລິຍະທຳຈີນໄປເຖິງບ່ອນນັ້ນ ແລະ ນຳເອົາອະລິຍະທຳປະເທດຕ່າງໆກັບຄືນຈີນ.

"ເມືອງຈິງເຕີເຈີ້ນ (Jingdezhen) ໄດ້ກວມເຄິ່ງໜຶ່ງຂອງປະຫວັດສາດເຄື່ອງປັ້ນດິນເຜົາຈີນ". ເມືອງຈິງເຕີເຈີ້ນ ທີ່ມີປະຫວັດສາດຜະລິດເຄື່ອງປັ້ນດິນເຜົາມາເປັນເວລາ 2.000 ກວ່າປີ ຖືກເອີ້ນວ່າເປັນ "ເມືອງເຄື່ອງປັ້ນດິນເຜົາພັນປີ" ຂອງຈີນ. ເຄື່ອງປັ້ນດິນເຜົາ 300 ລ້ານກວ່າເຄື່ອງ ທີ່ຜະລິດຈາກແຫ່ງນີ້ ເຄີຍຖືກສົ່ງໄປຂາຍຢູ່ 120 ກວ່າປະເທດໃນທົ່ວໂລກ ໃນປະຫວັດສາດ. ມື້ນີ້, ພວກເຮົາຈະນຳພາທ່ານໄປເມືອງຈິງເຕີເຈີ້ນແຂວງຈ່ຽງຊີ (Jiangxi) ເພື່ອສຳຜັດກັບຄວາມມີສະເໜ່ຂອງເມືອງເຄື່ອງປັ້ນດິນເຜົາຂອງຈີນ.

## ຫວນຄືນປະຫວັດສາດເມືອງເຄື່ອງປັ້ນດິນເຜົາ

ເມື່ອຍ່າງໄປຕາມຄຸ້ມຖະໜົນຖາວຢາງຫຼີ ເມືອງຈິງເຕີເຈີ້ນ, ທຸກບ່ອນຈະມີສ່ວນກ່ຽວຂ້ອງກັບເຄື່ອງປັ້ນດິນເຜົາ. ຮ່ອມທາງ 108 ທີ່ມີປະຫວັດສາດມາເປັນເວລາພັນປີ ແລະ ເຕົາເຜົາ ທີ່ມີປະຫວັດສາດມາເປັນເວລາ 400 ກວ່າປີ ໄດ້ສະແດງໃຫ້ເຫັນວ່າ: ໃນປະຫວັດສາດ, ເມືອງຈິງເຕີເຈີ້ນ ມີຄວາມຈະເລີນຮຸ່ງເຮືອງຫຼາຍ.

ຄຸ້ມຖະໜົນຖາວຢາງຫຼີ ທີ່ຈະເລີນຂຶ້ນຍ້ອນເຄື່ອງປັ້ນດິນເຜົາ ໄດ້ປະກອບດ້ວຍມໍລະດົກວັດທະນະທຳປະຫວັດສາດຕ່າງໆ ເຊັ່ນ: ຮ່ອງຮອຍເກົ່າໂຮງເຜົາພະບໍລົມມະວົງສານຸວົງ, ຫໍພິພິທະພັນຖ້ຳເຜົາພະບໍລົມມະວົງສານຸວົງ, ໝູ່ຖ້ຳເຜົາໃນລາຊະວົງໝິງ ແລະ ລາຊະວົງຊິງ, ເຮືອນເກົ່າປະຊາຊົນເຂດອ້ອມຂ້າງ ແລະ ປູສະນີຍະສະຖານອຸດສາຫະກຳເຄື່ອງປັ້ນດິນເຜົາ ແລະ ອື່ນໆ. ຄຽງຄູ່ກັບຮ່ອງຮອຍເກົ່າຕ່າງໆ ໄດ້ຮັບການບົວລະບັດຮັກສາໃຫ້ດີຂຶ້ນ, ຄຸ້ມຖະໜົນເກົ່າຂອງເມືອງເຄື່ອງປັ້ນດິນເຜົາປະກົດຄວາມມີສະເໜ່ພິເສດໃນປະຫວັດສາດຂອງຕົນ.

ຄອບຄົວ ຊຸນລີຊິນ ເປັນຜູ້ສືບທອດມໍລະດົກວັດທະນະທຳນາມມະທຳສີມືຊິງຮວາ ມາເປັນ 4 ເຊັ່ນຄົນແລ້ວ, ທ່ານຊຸນລີຊິນ ໄດ້ເຕີບໃຫຍ່ຂຶ້ນມາຢູ່ແຫ່ງນີ້. ປັດຈຸບັນ, ທຸກມື້, ທ່ານ ຈະແລກປ່ຽນກັບນັກທ່ອງທ່ຽວທີ່ເດີນທາງມາທ່ຽວຖາວຢາງຫຼີ ເພື່ອເຜີຍແຜ່ຄວາມມີສະເໜ່ຂອງເຄື່ອງປັ້ນດິນເຜົາຈີນ ໄປສູ່ທົ່ວໂລກ. ທ່ານ ພຽງແຕ່ຂີດແຕ້ມເປັນເວລາ 1 ຫາ 2 ນາທີ, ຮູບແຕ້ມທີ່ມີຊີວິດຊີວາກໍໄດ້ປະກົດຢູ່ຕາມເຄື່ອງປັ້ນດິນເຜົາຊິງຮວາແລ້ວ.

ທ່ານຊຸນລີຊິນ ກ່າວວ່າ: "ພວກເຮົາສາມາດສຳຜັດກັບຄວາມມີກຽດຂອງຄົນຮຸ່ນກ່ອນທີ່ນຳມາໃຫ້ພວກເຮົາ ແລະ ກໍສົ່ງເສີມໃຫ້ພວກເຮົາຈົ່ງສືບທອດສີມືໃຫ້ໄດ້ດີກວ່າເກົ່າ."

ປັດຈຸບັນ, ຄຸ້ມຖະໜົນຖາວຢາງຫຼີ ມີຜູ້ສືບທອດສີມືເຄື່ອງປັ້ນດິນເຜົາ 40 ກວ່າທ່ານ ແລະ ລູກສິດ 300 ກວ່າຄົນ ໃນທຸກຂັ້ນຕອນການຜະລິດເຄື່ອງປັ້ນດິນເຜົາແບບດັ້ງເດີມຂອງຈີນ.

ໃນຂະນະທີ່ສືບທອດສີມືດັ້ງເດີມແລ້ວ, ເມືອງຈິງເຕີເຈີ້ນ ກໍຍັງໄດ້ຕັ້ງໜ້າຄົ້ນຫາ ແລະ ນຳໃຊ້ຊັບພະຍາກອນວັດທະນະທຳດັ້ງເດີມ ເພື່ອຊຸກຍູ້ໃຫ້ວັດທະນະທຳຄຸ້ມຖະໜົນ ແລະ ຂະແໜງການທ່ອງທ່ຽວພັດທະນາແບບເຊື່ອມໂຍງເຂົ້າກັນ. ປີ 2023, ມີນັກທ່ອງທ່ຽວມາທ່ຽວຖາວຢາງຫຼີ ຫຼາຍກວ່າ 3,7 ລ້ານເທື່ອຄົນ.



**ເນື້ອໃນເພີ່ມເຕີມ:**

ເສັ້ນທາງສົ່ງອອກເຄື່ອງປັ້ນດິນເຜົາໃນສະໄໝບູຮານຂອງຈີນ ສາຍໜຶ່ງແມ່ນ "ເສັ້ນທາງສາຍໄໝທາງບົກ" ໂດຍຜ່ານເຂດຊິນຈ່ຽງ ສປ ຈີນ ໄປສູ່ອາຊີກາງ, ອາຊີຕາເວັນຕົກ ແລະ ເຂດອ່າວເປີເຊຍ; ອີກສາຍໜຶ່ງແມ່ນເສັ້ນທາງສາຍໄໝທາງທະເລ ເຊິ່ງອອກເດີນທາງຈາກນະຄອນກວາງໂຈ່ວແຂວງກວາງຕຸ້ງຈີນ, ອ້ອມແຫຼມມາເລ ໂດຍຜ່ານມະຫາສະມຸດອິນເດຍແລ້ວເດີນທາງໄປເຖິງອ່າວເປີເຊຍ, ສຸດທ້າຍໄປເຖິງບັນດາປະເທດອ້ອມຂ້າງເມດິເຕີຣານຽນ, ນັ້ນກໍຄື "ເສັ້ນທາງສາຍໄໝທາງທະເລ" ມີຊ່ຽວຊານບາງຄົນເອີ້ນວ່າ: "ເສັ້ນທາງເຄື່ອງປັ້ນດິນເຜົາ".



## ທູດວັດທະນະທຳຕາມເສັ້ນທາງສາຍໄໝທາງທະເລ

ໃນໄລຍະກາງ ແລະ ທ້າຍເດືອນຕຸລາປີກາຍນີ້, ການສຳຫຼວດບູຮານນະຄະດີຮ່ອງຮອຍເກົ່າເຮືອຫຼົ້ມຢູ່ທະເລຈີນໃຕ້ ໄດ້ເຜີຍແຜ່ໝາກຜົນຂອງຕົນເປັນໄລຍະ ໂດຍສະແດງໃຫ້ເຫັນວ່າ: ສິນຄ້າໃນເຮືອຫຼົ້ມເລກໜຶ່ງຕົ້ນຕໍແມ່ນເຄື່ອງປັ້ນດິນເຜົາ ເຊິ່ງໄດ້ເກັບກູ້ເອົາເຄື່ອງປັ້ນດິນເຜົາ 540 ກວ່າເຄື່ອງ (ຊຸດ) ຂຶ້ນມາ. ການສຳຫຼວດຄົ້ນຄວ້າບູຮານນະຄະດີໃນທະເລເລິກຄັ້ງນີ້ ສະແດງໃຫ້ເຫັນວ່າ: ເຄື່ອງປັ້ນດິນເຜົາເປັນສັກຂີພິຍານສຳຄັນໃຫ້ແກ່ການໄປມາຫາສູ່ດ້ານການຄ້າ ແລະ ການແລກປ່ຽນວັດທະນະທຳຕາມເສັ້ນທາງສາຍໄໝທາງທະເລ ໃນສະໄໝບູຮານຂອງຈີນ.

ປັດຈຸບັນ, ມູນເຊື້ອວັດທະນະທຳອັນເຂັ້ມຂຸ້ນຂອງຈີນ ກໍໄດ້ດຶງດູດຜູ້ທີ່ນິຍົມເຄື່ອງປັ້ນດິນເຜົາ, ນັກທຸລະກິດ ແລະ ນັກສິລະປິນຂອງຫຼາຍປະເທດໃນໂລກເດີນທາງມາຢ້ຽມຢາມເມືອງຈິງເຕີເຈີ້ນ. ການມາຢ້ຽມຢາມຂອງພວກເຂົາເຈົ້າ ກໍໄດ້ເຜີຍແຜ່ວັດທະນະທຳເຄື່ອງປັ້ນດິນເຜົາໄປສູ່ທົ່ວໂລກ.

ໃນເວລາໜຶ່ງໂມງກາງຄືນ, ທ້າວ ຮາເຄນ ທີ່ມາຈາກ ປະເທດຕວັກກີ່ ໄດ້ເດີນທາງເຂົ້າສູ່ຫ້ອງໄລສິດຂອງເຂດສວນອຸດສາຫະກຳເຄື່ອງປັ້ນດິນເຜົາເມືອງຈິງເຕີເຈີ້ນ ເພື່ອໂຄສະນາເຜີຍແຜ່ຜະລິດຕະພັນໃໝ່ໃຫ້ແກ່ລູກຄ້າ. ໃນຊຸມປີຜ່ານມາ, ເຄື່ອງປັ້ນດິນເຜົາຂອງທ້າວຮາເຄນ ແລະ ເມຍຂອງລາວ ໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າຫຼາຍ ເຊິ່ງໄດ້ສົ່ງອອກໄປຫຼາຍປະເທດໃນໂລກ ເຊັ່ນ: ຕວັກກີ່, ຝຣັ່ງ, ອັງກິດ, ເຢຍລະມັນ ແລະ ອີຕາລີ.

ການເປີດຂະບວນລົດໄຟຈີນ-ເອີຣົບ ກໍໄດ້ເຮັດໃຫ້ຜະລິດຕະພັນຂອງທ້າວ ຮາເຄນ ສົ່ງອອກໄປຫຼາຍປະເທດ ໄດ້ໄວກວ່າເກົ່າ. ສິນຄ້າສົ່ງອອກຂອງລາວ ທີ່ຜະລິດຈາກເຄື່ອງປັ້ນດິນເຜົາຕ່າງໆ ໄດ້ຜະລິດເປັນເຄື່ອງເອ້ ແລະ ເຄື່ອງສິລະປະຕ່າງໆ, ໄດ້ຈາກເຄື່ອງປັ້ນດິນເຜົາຊິງຮວາ ແບບດັ້ງເດີມກາຍມາເປັນເຄື່ອງປັ້ນດິນເຜົາທີ່ມີທິວຄິດປະດິດສ້າງໃນຍຸກປັດຈຸບັນ.

ທ່ານ ໂຈແມນ ຊ່າງປັ້ນດິນເຜົາແອສປາຍ ໄດ້ເດີນທາງມາເຖິງເມືອງຈິງເຕີເຈີ້ນ ໃນປີ 2022 ເພື່ອຮຽນຮູ້ສີມືແຕ້ມຮູບຕາມເຄື່ອງປັ້ນດິນເຜົາ. ໃນສາຍຕາຂອງທ່ານ, ເຖິງແມ່ນວ່າເມືອງຈິງເຕີເຈີ້ນ ເປັນເມືອງນ້ອຍໃນພາກກາງຂອງຈີນ, ແຕ່ກໍມີຄວາມຫຼາກຫຼາຍ ທຽບເທົ່າກັບ ຕົວເມືອງໃຫຍ່ຕ່າງໆຂອງຈີນ. ທ່ານ ກ່າວວ່າ: "ຢູ່ເມືອງຈິງເຕີຈິ້ນ, ກໍສາມາດຊື້ຂອງຫວານແບບກາຕາໂລນຽນຂອງແອສປາຍໄດ້ເຊັ່ນກັນ."

ທ້າວ ນີເຕີນີງ ອາຍຸ 32 ປີ ທີ່ມາຈາກອາເມຣິກາ, ລາວ ໄດ້ມາດຳລົງຊີວິດຢູ່ເມືອງຈິງເຕີເຈີ້ນ ເປັນເວລາ 8 ປີແລ້ວ. ຢູ່ "ເມືອງເຄື່ອງປັ້ນດິນເຜົາຈີນ" ແຫ່ງນີ້, ທ່ານ ໄດ້ບັນລຸຄວາມຝັນ ກ່ຽວກັບເຄື່ອງປັ້ນດິນເຜົາຂອງຕົນ ແລະ ຍິ່ງຮັກຫອມຄວາມອົບອຸ່ນຂອງດິນ ທີ່ເອົາມາເຮັດເປັນເຄື່ອງປັ້ນດິນເຜົາ. ສະນັ້ນ, ລາວ ໄດ້ຕັ້ງຊື່ໃຫ້ຕົນເອງວ່າເປັນ "ນີເຕີນີງ", ແປວ່າ ແສງສະຫວ່າງຂອງດິນ.

ນາງ ອາຍາໂອ ຕາກາຢາກິ ນັກສິລະປິນເຄື່ອງປັ້ນດິນເຜົາຍີ່ປຸ່ນ ໄດ້ດຳລົງຊີວິດຢູ່ເມືອງຈິງເຕີເຈີ້ນ ເປັນເວລາ 10 ປີແລ້ວ. ການຜະລິດຖ້ວຍຢ່າງດຽວ, ນາງ ສາມາດຜະລິດເປັນຖ້ວຍທີ່ມີສີສັນທີ່ອຸດົມສົມບູນກວ່າຢູ່ເມືອງຈິງເຕີເຈີ້ນ ແລະ ກໍໄດ້ຮັບຄວາມນິຍົມຫຼາຍກວ່າ ເມື່ອທຽບໃສ່ຖ້ວຍທີ່ຜະລິດຢູ່ຍີ່ປຸ່ນ. ຈາກດິນ, ວັດຖຸດິບ, ເຄື່ອງມື ແລະ ເຕົາເຜົາເຄື່ອງປັ້ນດິນເຜົາ, ຢູ່ເມືອງຈິງເຕີເຈີ້ນ, ຈະສາມາດຕອບສະໜອງຕາມຄວາມຕ້ອງການຂອງນາງໄດ້ທຸກຢ່າງ.

ຕາມສະຖິຕິ, ຊາວຕ່າງປະເທດທີ່ມັກຮັກເຄື່ອງປັ້ນດິນເຜົາ ທີ່ມາດຳລົງຊີວິດ ຫຼື ເຮັດວຽກຢູ່ຈິງເຕີເຈີ້ນ ມີຫຼາຍກວ່າ 5.000 ຄົນ. ເມືອງຈິງເຕີຈິ້ນ ໄດ້ດຶງດູດຊາວຕ່າງປະເທດເປັນຈຳນວນຫຼວງຫຼາຍ ຍ້ອນວັດທະນະທຳເຄື່ອງປັ້ນດິນເຜົາທີ່ມີເອກະລັກພິເສດຂອງຕົນ, ເຮັດໃຫ້ຊາວຕ່າງປະເທດທີ່ມັກຮັກເຄື່ອງປັ້ນດິນເຜົາເຫຼົ່ານີ້ ກາຍເປັນທູດວັດທະນະທຳຕາມເສັ້ນທາງສາຍໄໝທາງທະເລ.

ແຫຼ່ງຂ່າວ: Jiangnan City Daily, ພາບໂດຍ: ສຳນັກຂ່າວຊິນຮວາ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

